**ມິຊຊາອາທິດທີ 3 ກໍານົດທໍາມະດາ**

**ວັນທີ 22 ມັງກອນ 2023**



**ພຣະວໍລະສານໂດຍນັກບຸນມັດເທວ 4, 12-23**

ເມື່ອຊົງຊາບວ່າທ່ານຢວງຖືກຈັບ, ພຣະເຢຊູເຈົ້າຈຶ່ງກັບສູ່ແຂວງກາລີເລ. ແລະພຣະອົງໄດ້ຈາກເມືອງນາຊາແລັດມາອາໄສຢູ່ເມືອງກາຟາກນາອຸມແຄມຝັ່ງທະເລທີ່ຊາຍແດນຊາບູລອນແລະແນບທາລີ. ດັ່ງນີ້ເພື່ອໃຫ້ສໍາເລັດຕາມຄໍາທໍານາຍຊຶ່ງປະພາສົກອີຊາຢາໄດ້ກ່າວໄວ້ວ່າ: ດິນແດນຊາບູລອນ, ດິນແດນແນບທາລີແຄມຝັ່ງທະເລຢໍແດນຟາກນັ້ນ « ກາລີເລແຫ່ງຊາວຕ່າງດ້າວ »! ລາດສະດອນທີ່ຢູ່ໃນຄວາມມືດໄດ້ເຫັນແສງສະວ່າງແຈ້ງອັນຍິ່ງໃຫຍ່. ແສງສະວ່າງໄດ້ຮຸ່ງແຈ້ງຂຶ້ນເໜືອພວກທີ່ຢູ່ໃນຮົ່ມເງົາແຫ່ງຄວາມຕາຍ. ນັບແຕ່ເວລານັ້ນເປັນຕົ້ນມາພຣະເຢຊູເຈົ້າໄດ້ເລີ່ມປະກາດເທດສອນວ່າ: « ຈົ່ງເປັນທຸກກັບໃຈ ດ້ວຍວ່າພຣະລາໄຊສະຫວັນໃກ້ເຂົ້າມາແລ້ວ ».

ໃນເວລານັ້ນ, ພຣະເຢຊູເຈົ້າຊົງເດີນລຽບຝັ່ງທະເລກາລີເລ ພຣະອົງຊົງຫລຽວເຫັນສອງອ້າຍນ້ອງຄື: ຊີມອນ, ຜູ້ຊຶ່ງມີອີກຊື່ໜຶ່ງວ່າເປໂຕ ແລະອັນເດຣຜູ້ນ້ອງຊາຍກໍາລັງຕຶກແຫໃນທະເລ. ຍ້ອນວ່າພວກເຂົາເປັນຊາວປະມົງ. ພຣະອົງຊົງກ່າວແກ່ພວກເຂົາວ່າ: « ຈົ່ງຕິດຕາມເຮົາມາ ». ເຮົາຈະເຮັດໃຫ້ພວກເຈົ້າເປັນຊາວປະມົງຈັບຄົນ. ທັນທີ, ເຂົາທັງສອງກໍປະແຫແລະຕິດຕາມພຣະອົງໄປ. ເມື່ອສະເດັດໄປໄກໜ້ອຍໜຶ່ງ, ພຣະອົງຊົງພົບອ້າຍນ້ອງອີກສອງຄົນຄື: ຢາໂກເບ ບຸດຂອງເຊເບເດ ແລະຢວງຜູ້ນ້ອງຊາຍ ກໍາລັງຜູງມອງຢູ່ໃນເຮືອພ້ອມກັບເຊເບເດຜູ້ເປັນບິດາ. ພຣະອົງຊົງຮຽກພວກເຂົາ. ທັນທີ, ພວກເຂົາກໍປະເຮືອພ້ອມທັງບິດາ ແລະຕິດຕາມພຣະອົງໄປ.

ພຣະເຢຊູເຈົ້າຊົງເດີນໄປທົ່ວແຂວງກາລີເລ ພ້ອມເທດສອນຕາມໂຮງທໍາຕ່າງໆ, ປະກາດຂ່າວປະເສີດແຫ່ງອານາຈັກ ແລະປິ່ນປົວປະຊາຊົນໃຫ້ດີພະຍາດ ແລະການເປັ້ຍລ່ອຍທຸກຊະນິດ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ເມື່ອພວກເຮົາຟັງວາຈາພຣະເຈົ້າວັນນີ້ຈະເຫັນວ່າວຽກງານການປະກາດພຣະລາໄຊພຣະເຈົ້າແລະການເປັນທຸກກັບໃຈເປັນສິ່ງສຳຄັນແລະຮີບດ່ວນ. ສິ່ງນີ້ສະແດງອອກຢູ່ບ່ອນໃດ? ສະແດງອອກຢູ່ບ່ອນວ່າເມື່ອນັກບຸນຢວງບັບຕິສຕາຖືກຈັບໃສ່ຄຸກໃນສະໄໝຂອງກະສັດເຮຣັອດ. ພຣະເຢຊູເຈົ້າກໍປາກົດຕົວທັນທີແລະສືບຕໍ່ວຽກງານການປະກາດພຣະລາໄຊພຣະເຈົ້າ. ພຣະເຢຊູເຈົ້າໄດ້ເລີ່ມປະກາດຂ່າວດີນີ້ໃນດິນແດນຂອງຊາບູລອນແລະແນບທາລີອັນເປັນດິນແດນຂອງຄົນຕ່າງສາດສະໜາ. ຍ້ອນວ່າພຣະລາໄຊພຣະເຈົ້າບໍ່ໄດ້ຈຳກັດແຕ່ໃນກຸ່ມຄົນຢິວຫລືເຂດໃດເຂດໜຶ່ງເທົ່ານັ້ນ ແຕ່ພຣະລາໄຊພຣະເຈົ້າເປັນຂອງທຸກຄົນທຸກຊາດທຸກພາສາ. ດັ່ງໃນຕອນທ້າຍພຣະວໍລະສານຂອງນັກບຸນມັດເທວ ເມື່ອພຣະເຢຊູເຈົ້າກັບເປັນຄືນມາຈາກພວກຜູ້ຕາຍ, ພຣະອົງໄດ້ສັ່ງບອກພວກອັກຄະສາວົກວ່າ: « ຈົ່ງໄປທົ່ວໂລກທຳໃຫ້ທຸກຊາດທຸກພາສາມາເປັນລູກສິດຂອງເຮົາ. ຈົ່ງລ້າງບາບໃຫ້ພວກເຂົາເດຊະພຣະນາມພຣະບິດາແລະພຣະບຸດແລະພຣະຈິດ. ແລະສອນໃຫ້ພວກເຂົາຖືຕາມພຣະບັນຍັດທັງມວນຂອງເຮົາ » (ມທ 28, 19-20).

ຍ້ອນການປະກາດພຣະລາໄຊພຣະເຈົ້າເປັນເລື່ອງສຳຄັນແລະຮີບດ່ວນ. ດັ່ງນັ້ນໃນຕອນຕົ້ນພາລະກິດການເທດສອນຂອງພຣະເຢຊູເຈົ້າ ພຣະອົງໄດ້ຮຽກເອົາລູກສິດສີ່ຄົນທຳອິດຄື: ຊີມອນເປໂຕ, ອັນເດຣ, ຢາໂກເບແລະຢວງ. ເພື່ອໃຫ້ພວກເຂົາໄດ້ຕິດຕາມພຣະອົງ, ຢູ່ກັບພຣະອົງແລະຟັງພຣະອົງເທດສອນ. ເພື່ອວັນໜຶ່ງພວກເຂົາຈະໄດ້ສືບຕໍ່ພາລະກິດຂອງພຣະອົງໃນການປະກາດຂ່າວດີແຫ່ງອານາຈັກສະຫວັນ. ດັ່ງທີ່ພຣະອົງໄດ້ສືບຕໍ່ພາລະກິດນີ້ຈາກທ່ານຢວງບັບຕິສຕາ.

ສ່ວນພວກເຮົາຜູ້ເປັນສິດຂອງພຣະອົງ, ພວກເຮົາໄດ້ສືບຕໍ່ພາລະກິດການປະກາດອານາຈັກສະຫວັນໃນຊີວິດຂອງພວກເຮົາບໍ? ພວກເຮົາໄດ້ໃຫ້ຄວາມສຳຄັນແກ່ພາລະກິດນີ້ບໍ? ຫລືພວກເຮົາມົວເມົາແຕ່ນຳອານາຈັກຢູ່ໃນແຜ່ນດິນນີ້ອັນແມ່ນຄວາມຮັ່ງມີແລະຊື່ສຽງໃນສັງຄົມ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ຮູ້ເຖິງຄວາມສຳຄັນຂອງຂ່າວດີແຫ່ງອານາຈັກສະຫວັນ. ໂຜດໃຫ້ລູກມີຄວາມກະຕືລືລົ້ນໃນການປະກາດຂ່າວດີນີ້ໃຫ້ທຸກຄົນໄດ້ຮູ້ຈັກແລະໄດ້ຮັບຄວາມຣອດພົ້ນດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ